ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0778/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2023

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການສະບັບເລກທີ 134/ຫສນຍ, ລົງວັນທີ 01 ກຸມພາ 2023, ທິດຊີ້ນຳກ່ຽວກັບການມອບ ໃຫ້ກົມວິຊາການ (ກົມການຄ້າພາຍໃນ) ເຊັນແຈ້ງການປັບລາຄານ້ຳມັນເຊື້ອໄຟແຕ່ລະໄລຍະ.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການເຊັນແຈ້ງການປັບລາຄານ້ຳມັນເຊື້ອໄຟໃນແຕ່ລະໄລຍະ ສະບັບເລກທີ 0123/ອຄ, ລົງວັນທີ 01 ກຸມພາ 2023.
- ອີງຕາມ ທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 02 ສິງຫາ 2023.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດ ດັ່ງນີ້:**

1. ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 670 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 550 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 880 ກີບ/ລິດ.

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ລ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 29.250 | 29.920 | 670 | 2,29 | |
| 2 | ອຊ ທຳມະດາ | 21.920 | 22.470 | 550 | 2,51 | |
| 3 | ກາຊວນ | 18.920 | 19.800 | 880 | 4,65 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 03 ສິງຫາ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0777/ກຄພນ, ລົງວັນທີ 02 ສິງຫາ 2023 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0751/ກຄພນ, ລົງວັນທີ 26 ກໍລະກົດ 2023.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ພູວຽງ ພົງສາ

ບ່ອນສົ່ງ:
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 03 ສິງຫາ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **29,920** | **22,470** | **19,800** |
| 2 | ແຂວງຜົ້ງສາລີ | **30,910** | **23,460** | **20,790** |
| 3 | ແຂວງຫຼວງນ້ຳທາ | **30,410** | **22,970** | **20,290** |
| 4 | ແຂວງອຸດົມໄຊ | **30,590** | **23,140** | **20,470** |
| 5 | ແຂວງບໍ່ແກ້ວ | **30,020** | **22,570** | **19,900** |
| 6 | ແຂວງຫຼວງພະບາງ | **30,420** | **22,980** | **20,310** |
| 7 | ແຂວງໄຊຍະບູລີ | **30,240** | **22,800** | **20,130** |
| 8 | ແຂວງຫົວພັນ | **30,410** | **22,980** | **20,310** |
| 9 | ແຂວງຊຽງຂວາງ | **30,110** | **22,660** | **19,990** |
| 10 | ແຂວງວຽງຈັນ | **29,920** | **22,470** | **19,800** |
| 11 | ແຂວງບໍລິຄຳໄຊ | **30,030** | **22,590** | **19,920** |
| 12 | ແຂວງຄຳມ່ວນ | **29,950** | **22,500** | **19,830** |
| 13 | ແຂວງສະຫວັນນະເຂດ | **29,950** | **22,500** | **19,830** |
| 14 | ແຂວງສາລະວັນ | **30,200** | **22,760** | **20,090** |
| 15 | ແຂວງຈຳປາສັກ | **29,980** | **22,530** | **19,860** |
| 16 | ແຂວງເຊກອງ | **30,200** | **22,760** | **20,090** |
| 17 | ແຂວງອັດຕະປື | **30,250** | **22,800** | **20,130** |
| 18 | ແຂວງໄຊສົມບູນ | **30,340** | **22,890** | **20,230** |

ນະຄອນຫຼວງວຽງຈັນ, ວັນທີ 2 ສິງຫາ 2023

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 0777/ກຄພນ
ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2023

## ໂຄງສ້າງລາຄານ້ຳມັນເຊື້ອໄຟ

ຫົວໜ່ວຍ: ກີບ/ລິດ.

| ທ້ອງ | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 | 25 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ບໍລິສັດ ນຳເຂົ້າ ແລະ ສົ່ງອອກ | | | | | | | | | | | | | ບໍລິສັດ ຈຳໜ່າຍພາຍໃນ | | | | | ປ້ຳນ້ຳມັນເຊື້ອໄຟ | | | | | | |
| ບ່ອນ | ຊະນິດ | ລາຄາ CIF ຄິດໄລ່ພາສີ | | ພາສີ ຂາເຂົ້າ | ອາກອນ ຊົມໃຊ້ ຂາເຂົ້າ | ກທ ທາງ | ຄັງແຮ | ລວມ ຕົ້ນທຶນ | ອມພ ສິນເຂົ້າ | ຄ່າບໍລິການ | ບໍ່ລວມ ອມພ | ອມພ 7% | ລວມ ອມພ | ອມພ ມອບຕື່ມ | ຄ່າ ບໍລິການ | ບໍ່ລວມ ອມພ | ອມພ 7% | ລວມ ອມພ | ອມພ ມອບຕື່ມ | ຄ່າ ບໍລິການ | ບໍ່ລວມ ອມພ | ອມພ 7% | ປະຈຸບັນ | ລວມ ອມພ (ສະເໜີ) | ອມພ ມອບຕື່ມ | ເພີ່ມ/ ຫຼຸດ |
| | | ໂດລາສະຫະລັດ | ກີບ | | | | | | | | | | | | | | | | | | | | | | | |
| ນ.ວ | ອ/ຊ ພິເສດ | $ 0.7546 | 14,666 | 2,933 | 7,040 | 520 | 800 | 25,960 | 1,725 | 800 | 26,760 | 1,873 | 28,633 | 148 | 600 | 27,360 | 1,915 | 29,270 | 42 | 600 | 27,960 | 1,957 | **29,250** | **29,920** | 42 | 670 |
| | ອ/ຊ ທຳມະດາ | $ 0.7144 | 13,885 | 2,083 | 2,555 | 520 | - | 19,043 | 1,297 | 800 | 19,843 | 1,389 | 21,232 | 92 | 550 | 20,393 | 1,427 | 21,820 | 39 | 600 | 20,993 | 1,469 | **21,920** | **22,470** | 42 | 550 |
| | ກາຊວນ | $ 0.8003 | 15,555 | 778 | - | 520 | - | 16,853 | 1,143 | 700 | 17,553 | 1,229 | 18,781 | 85 | 450 | 18,003 | 1,260 | 19,260 | 32 | 500 | 18,503 | 1,295 | **18,920** | **19,800** | 35 | 880 |
| ຄຳມ່ວນ | ອ/ຊ ພິເສດ | $ 0.7554 | 14,684 | 2,937 | 7,048 | 520 | 800 | 25,989 | 1,727 | 800 | 26,789 | 1,875 | 28,664 | 148 | 600 | 27,389 | 1,917 | 29,310 | 42 | 600 | 27,989 | 1,959 | **29,280** | **29,950** | 42 | 670 |
| | ອ/ຊ ທຳມະດາ | $ 0.7155 | 13,906 | 2,086 | 2,559 | 520 | - | 19,071 | 1,299 | 800 | 19,871 | 1,391 | 21,262 | 92 | 550 | 20,421 | 1,429 | 21,850 | 39 | 600 | 21,021 | 1,471 | **21,950** | **22,500** | 42 | 550 |
| | ກາຊວນ | $ 0.8017 | 15,583 | 779 | - | 520 | - | 16,883 | 1,145 | 700 | 17,583 | 1,231 | 18,813 | 85 | 450 | 18,033 | 1,262 | 19,290 | 32 | 500 | 18,533 | 1,297 | **18,950** | **19,830** | 35 | 880 |
| ສະຫວັນ | ອ/ຊ ພິເສດ | $ 0.7554 | 14,684 | 2,937 | 7,048 | 520 | 800 | 25,989 | 1,727 | 800 | 26,789 | 1,875 | 28,664 | 148 | 600 | 27,389 | 1,917 | 29,310 | 42 | 600 | 27,989 | 1,959 | **29,280** | **29,950** | 42 | 670 |
| | ອ/ຊ ທຳມະດາ | $ 0.7155 | 13,908 | 2,086 | 2,559 | 520 | - | 19,073 | 1,299 | 800 | 19,873 | 1,391 | 21,264 | 92 | 550 | 20,423 | 1,430 | 21,850 | 39 | 600 | 21,023 | 1,472 | **21,950** | **22,500** | 42 | 550 |
| | ກາຊວນ | $ 0.8017 | 15,583 | 779 | - | 520 | - | 16,883 | 1,145 | 700 | 17,583 | 1,231 | 18,813 | 85 | 450 | 18,033 | 1,262 | 19,290 | 32 | 500 | 18,533 | 1,297 | **18,950** | **19,830** | 35 | 880 |
| ຈຳປາສັກ | ອ/ຊ ພິເສດ | $ 0.7563 | 14,700 | 2,940 | 7,056 | 520 | 800 | 26,016 | 1,729 | 800 | 26,816 | 1,877 | 28,693 | 148 | 600 | 27,416 | 1,919 | 29,330 | 42 | 600 | 28,016 | 1,961 | **29,310** | **29,980** | 42 | 670 |
| | ອ/ຊ ທຳມະດາ | $ 0.7166 | 13,928 | 2,089 | 2,563 | 520 | - | 19,100 | 1,301 | 800 | 19,900 | 1,393 | 21,293 | 92 | 550 | 20,450 | 1,431 | 21,880 | 39 | 600 | 21,050 | 1,473 | **21,980** | **22,530** | 42 | 550 |
| | ກາຊວນ | $ 0.8031 | 15,609 | 780 | - | 520 | - | 16,910 | 1,147 | 700 | 17,610 | 1,233 | 18,842 | 85 | 450 | 18,060 | 1,264 | 19,320 | 32 | 500 | 18,560 | 1,299 | **18,980** | **19,860** | 35 | 880 |
| ບໍ່ແກ້ວ | ອ/ຊ ພິເສດ | $ 0.7575 | 14,723 | 2,945 | 7,067 | 520 | 800 | 26,054 | 1,731 | 800 | 26,854 | 1,880 | 28,734 | 148 | 600 | 27,454 | 1,922 | 29,380 | 42 | 600 | 28,054 | 1,964 | **29,350** | **30,020** | 42 | 670 |
| | ອ/ຊ ທຳມະດາ | $ 0.7181 | 13,957 | 2,094 | 2,568 | 520 | - | 19,139 | 1,303 | 800 | 19,939 | 1,396 | 21,334 | 92 | 550 | 20,489 | 1,434 | 21,920 | 39 | 600 | 21,089 | 1,476 | **22,020** | **22,570** | 42 | 550 |
| | ກາຊວນ | $ 0.8049 | 15,644 | 782 | - | 520 | - | 16,946 | 1,150 | 700 | 17,646 | 1,235 | 18,882 | 85 | 450 | 18,096 | 1,267 | 19,360 | 32 | 500 | 18,596 | 1,302 | **19,020** | **19,900** | 35 | 880 |
| ຊຽງຂວາງ | ອ/ຊ ພິເສດ | $ 0.7601 | 14,773 | 2,955 | 7,091 | 520 | 800 | 26,139 | 1,737 | 800 | 26,939 | 1,886 | 28,825 | 148 | 600 | 27,539 | 1,928 | 29,470 | 42 | 600 | 28,139 | 1,970 | **29,440** | **30,110** | 42 | 670 |
| | ອ/ຊ ທຳມະດາ | $ 0.7214 | 14,021 | 2,103 | 2,580 | 520 | - | 19,224 | 1,309 | 800 | 20,024 | 1,402 | 21,426 | 92 | 550 | 20,574 | 1,440 | 22,010 | 39 | 600 | 21,174 | 1,482 | **22,110** | **22,660** | 42 | 550 |
| | ກາຊວນ | $ 0.8091 | 15,726 | 786 | - | 520 | - | 17,032 | 1,156 | 700 | 17,732 | 1,241 | 18,973 | 85 | 450 | 18,182 | 1,273 | 19,450 | 32 | 500 | 18,682 | 1,308 | **19,110** | **19,990** | 35 | 880 |
| ໄຊຍະບູລີ | ອ/ຊ ພິເສດ | $ 0.7575 | 14,723 | 2,945 | 7,067 | 520 | 800 | 26,054 | 1,731 | 800 | 26,854 | 1,880 | 28,734 | 148 | 600 | 27,454 | 1,922 | 29,380 | 42 | 600 | 28,054 | 1,964 | **29,350** | **30,020** | 42 | 670 |
| | ອ/ຊ ທຳມະດາ | $ 0.7181 | 13,957 | 2,094 | 2,568 | 520 | - | 19,139 | 1,303 | 800 | 19,939 | 1,396 | 21,334 | 92 | 550 | 20,489 | 1,434 | 21,920 | 39 | 600 | 21,089 | 1,476 | **22,020** | **22,570** | 42 | 550 |
| | ກາຊວນ | $ 0.8049 | 15,644 | 782 | - | 520 | - | 16,946 | 1,150 | 700 | 17,646 | 1,235 | 18,882 | 85 | 450 | 18,096 | 1,267 | 19,360 | 32 | 500 | 18,596 | 1,302 | **19,020** | **19,900** | 35 | 880 |

ໝາຍເຫດ : ອັດຕາແລກປ່ຽນ ທ/ຄ ການຄ້າຕ່າງປະເທດລາວ ມະຫາຊົນ ມື້ຄິດໄລ່ໂຄງສ້າງ ຄັ້ງວັນທີ 02/08/2023 = 19,437 ກີບ/ໂດລາສະຫະລັດ

| | ອ/ຊ ພິເສດ | ອ/ຊ ທຳມະດາ | ກາຊວນ |
|---|---|---|---|
| ພາສີ | 20% | 15% | 5% |
| ອາຊ | 40% | 16% | 0% |
| ອມພ | 7% | 7% | 7% |

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ພູວຽງ ພົງສາ